# ແບບຟອມຂໍຮັບສິດໃນ

## Campaign "Suzuki Let's be Friends" 2021

ລະຫັດເລກທີ..............

**ລາຍລະອຽດຂໍ້ມູນ ຜູ້ແນະນຳ**

1, ພະນັກງານ ຫຼື ຄອບຄົວຂອງພະນັກງານ ☐. 2, ບຸກຄົນທົ່ວໄປ ☐.

1) ຊື່ ແລະ ນາມສະກຸນ.......................................ເບີໂທ...................................................

2) ທີ່ຢູ່ ບ້ານ...............................ເມືອງ...................................ແຂວງ..................................

3) ອາຊີບ.......................................ເລກບັດປະຈຳຕົວ ຫຼື ໜັງສືເດີນທາງ..................................

4) Email:.......................................ວັນທີ/ເດືອນ/ປີ ທີ່ສະໝັກຂໍຮັບສິດ..........................

***ເງື່ອນໄຂຜູ້ແນະນຳ ແລະ ກະຕິກາຜູ້ສະມັກຂໍຮັບສິດ**

1. ໃນການເຂົ້າຮ່ວມ Campaign "Suzuki Let's be Friends" 2021 ສາມາດລົງທະບຽນໃນແບບຟອມການຂໍເຂົ້າຮ່ວມແຄມເປນ ຕັ້ງແຕ່ວັນທີ 04 ມັງກອນ 2021 ເຖິງ 18 ທັນວາ 2021.
2. ບຸກຄົນໃດໜຶ່ງທີ່ມີວັດຖຸປະສົງເຂົ້າຮ່ວມ Campaign "Suzuki Let's be Friends" 2021 ຈະຕ້ອງລົງທະບຽນໃນແບບຟອມການຂໍເຂົ້າຮ່ວມແຄມເປນ ທີ່ທາງບໍລິສັດ ເປັນຜູ້ອອກແບບຟອມໃຫ້ ກ່ອນ 7ວັນ ໂດຍນັບແຕ່ວັນທີ່ຜູ້ຮັບແບບຟອມເຊັນຮັບຮູ້ ແລະ ເຊັນອະນຸມັດເອກະສານ ຈຶ່ງຈະສາມາດໄດ້ຮັບຂອງລາງວັນ ຫຼື ເງິນສົມມະນາຄຸນບອກຕໍ່ ຫຼື ແນະນຳລູກຄ້າຊື້ລົດໄດ້ ຊຶ່ງການລົງທະບຽນຈະແບ່ງອອກເປັນ 2ລະບົບ ດັ່ງນີ້ຄື:
   1) ລະບົບ Offline ໂດຍລູກຄ້າຈະຕ້ອງສະໝັກຂໍຮັບສິດເຂົ້າຮ່ວມ Campaign ຜ່ານການຂຽນຂໍ້ມູນ ໃນແບບຟອມທີ່ທາງບໍລິສັດມອບໃຫ້ ພ້ອມກັບ ມີລາຍເຊັນ ຜູ້ສະໝັກຂໍຮັບສິດ, ຜູ້ຮັບເອກະສານແບບຟອມ ແລະ ຜູ້ອະນຸມັດ ຈຶ່ງຈະສາມາດຖືໄດ້ວ່າເອກະສານດັ່ງກ່າວມີຄວາມຖືກຕ້ອງ ແລະ ສາມາດຮັບສິດໄດ້.
   2) ລະບົບ Online ຜ່ານເວບໄຊ www.suzuki.com.la ໂດຍລູກຄ້າສາມາດດາວໂຫຼດແບບຟອມໃນເວບໄຊ ແລ້ວຂຽນຂໍ້ມູນໃຫ້ຄົບຖ້ວນຕາມເອກະສານ ພ້ອມກັບ ມີລາຍເຊັນ ຜູ້ສະໝັກຂໍຮັບສິດ ສະແກນສົ່ງເຂົ້າ Email ຫຼື ລິ້ງທີ່ແນບໄວ້ໃນໜ້າເວບໄຊ ຂອງບໍລິສັດ ແລ້ວທາງບໍລິສັດ ຈະສົ່ງ Email ຕອບກັບຫາຜູ້ຮ້ອງຂໍຮັບສິດ ຈຶ່ງຈະຖືວ່າການຮ້ອງຂໍຮັບສິດສົມບູນຖືກຕ້ອງ.
3. ພະນັກງານ ຫຼື ຄອບຄົວຂອງພະນັກງານ ຫຼື ບຸກຄົນໃດໜຶ່ງທີ່ມີວັດຖຸປະສົງເຂົ້າຮ່ວມ Campaign "Suzuki Let's be Friends" 2021 ຈະຕ້ອງລົງທະບຽນໃນແບບຟອມການຂໍເຂົ້າຮ່ວມແຄມເປນກ່ອນຈຶ່ງຈະສາມາດໄດ້ຮັບຂອງລາງວັນ ຫຼື ເງິນສົມມະນາຄຸນການແນະນຳຊື້ລົດຍີ່ຫໍ້ ຊູຊຸກິໄດ້.
4. ພະນັກງານ ຫຼື ຄອບຄົວ ຫຼື ບຸກຄົນໃດໜຶ່ງທີ່ມີວັດຖຸປະສົງເຂົ້າຮ່ວມ Campaign "Suzuki Let's be Friends" 2021 ຈະຕ້ອງລົງທະບຽນໃນແບບຟອມການຂໍເຂົ້າຮ່ວມແຄມເປັນດ້ວຍຕົນເອງເທົ່ານັ້ນ ບໍ່ສາມາດໃຫ້ບຸກຄົນອື່ນ ຫຼື ມອບສິດໃຫ້ບຸກຄົນອື່ນລົງທະບຽນແທນໃຫ້ໄດ້.
5. ລາງວັນສຳຫຼັບຜູ້ໄດ້ຮັບສິດສົມບູນ: ຮັບສິດ 3ຕໍ່.
   - ພະນັກງານ ຫຼື ຄອບຄົວຂອງພະນັກງານ ຫຼື ບຸກຄົນໃດໜຶ່ງ ທີ່ແນະນຳລູກຄ້າຊື້ຜະລິດຕະພັນລົດໃຫຍ່ຍີ່ຫໍ້ ຊູຊຸກິ ສາມາດຮັບເງິນສົມມະນາຄຸນ 1,800,000 ກີບ/ຄັນ.
   - ບຸກຄົນໃດໜຶ່ງ ທີ່ແນະນຳລູກຄ້າຊື້ຜະລິດຕະພັນລົດໃຫຍ່ຍີ່ຫໍ້ ຊູຊຸກິ ຂອງຊ່ວງໄລຍະເວລາການຈັດ Campaign "Suzuki Let's be Friends" 2021 ຕັ້ງແຕ່ 2-4 ຄັນສາມາດລຸ້ນຮັບ ສາຍຄໍຄຳໜັກ 1ສະຫຼຶງ ຈຳນວນ 1ລາງວັນ.

- ບຸກຄົນໃດໜຶ່ງ ທີ່ແນະນຳລູກຄ້າຊື້ຜະລິດຕະພັນລົດໃຫຍ່ຢີ່ຫໍ້ ຊູຊຸກິ ຂອງຊ່ວງໄລຍະເວລາການຈັດ **Campaign "Suzuki Let's be Friends"** 2021 ຕັ້ງແຕ່ 5 ຄັນຂຶ້ນໄປ ຮັບທັນທີ ສາຍຄໍຄຳໜັກ 1ສະຫຼຶງ ຈຳນວນ 1ລາງວັນ.

**6.** ຜູ້ເຂົ້າຮ່ວມ **Campaign "Suzuki Let's be Friends"** 2021 ຕ້ອງສຶກສາກະຕິກາ ແລະ ເງື່ອນໄຂການເຂົ້າຮ່ວມກິດຈະກຳຍອມຮັບກະຕິກາ ແລະ ການຮັບລາງວັນທຸກປະການ.

**7.** ຜູ້ທີ່ໄດ້ຮັບລາງວັນຈະມີສິດໄດ້ຮັບລາງວັນກໍ່ຕໍ່ເມື່ອທາງບໍລິສັດໄດ້ຮັບເງິນຊຳລະຈາກຄ່າລົດທີ່ລູກຄ້າຊື້ 100%ກ່ອນເທົ່ານັ້ນ(ກໍລະນີການຈ່າຍດາວ ແມ່ນຕ້ອງໄດ້ຮັບການຊໍາລະຈາກໄຟແນ້ນ 100% ເຊັ່ນດຽວກັນ).

**8.** ຜູ້ທີ່ໄດ້ຮັບລາງວັນຕ້ອງຢືນຢັນສິດ ແລະ ເຮັດຕາມລະບຽບກົດກະຕິການການເຂົ້າຮ່ວມໃນ **Campaign "Suzuki Let's be Friends"** 2021 ໂດຍການມີຕົວຕົນທີ່ແທ້ຈິງ ແລະ ຕ້ອງກອົບປີ້ ບັດປະຈຳຕົວ ຫຼື ໜັງສືເດີນທາງໃນມື້ມາຮັບລາງວັນ ແລະ ຈະຕ້ອງກົງກັນກັບຂໍ້ມູນທີ່ໄດ້ລົງທະບຽນໄວ້ກ່ອນໜ້ານີ້ເທົ່ານັ້ນ.

**9.** ສຳຫຼັບຜູ້ໄດ້ຮັບສິດສົມບູນໄດ້ຮັບເງິນສົມມະນາຄຸນ ບໍລິສັດ ຈະຈ່າຍໃຫ້ເປັນແຊັກເທົ່ານັ້ນໂດຍອອກຊື່ຕາມເອກະສານທີ່ໄດ້ລົງທະບຽນປະກອບມາແຕ່ເບື້ອງຕົ້ນຢ່າງຖືກຕ້ອງສົມບູນຄົບຖ້ວນເທົ່ານັ້ນ.

**10.** ກໍລະນີບຸກຄົນໃດໜຶ່ງມີສິດໂດຍຖືກຕ້ອງສົມບູນໃນການຮັບເງິນສົມມະນາຄຸນ ຈາກການແນະນຳລູກຄ້າຊື້ລົດ ແລະ ມີສິດໂດຍສົມບູນໃນການມາຮັບເອົາເງິນສົມມະນາຄຸນທີ່ບໍລິສັດຈະຕ້ອງເປັນບຸກຄົນດຽວກັນທີ່ໄດ້ລົງທະບຽນສະໝັກຂໍຮັບສິດໃນການເຂົ້າຮ່ວມ ແຄມເປນໄວ້ໃນເບື້ອງຕົ້ນເທົ່ານັ້ນ. (ຍົກເວັ້ນກໍລະນີຖ້າມີຄວາມຈຳເປັນໃດໜຶ່ງທີ່ບໍ່ສາມາດມາຮັບເອົາເງິນສົມມະນາຄຸນດ້ວຍຕົນເອງໄດ້ ສາມາດມອບສິດໃຫ້ບຸກຄົນໃດໜຶ່ງໃນຄອບຄົວມາຮັບເອົາແທນໄດ້ ແຕ່ຈະຕ້ອງມີຫຼັກຖານຢັ້ງຢືນໃນການມອບສິດໃຫ້ບຸກຄົນໃນຄອບຄົວມາຮັບເອົາແທນ ແລະ ຈຳເປັນຕ້ອງໄດ້ ກ໊ອບປີ້ສຳມະໂນຄົວທີ່ສາມາດຢັ້ງຢືນໄດ້ວ່າ ບຸກຄົນທີ່ມາຮັບເອົາເງິນສົມມະນາຄຸນແທນນັ້ນ ເປັນບຸກຄົນໃນຄອບຄົວແທ້ຈິງ) ກໍລະນີອື່ນໃດທີ່ນອກເໜືອຈາກນີ້ ແມ່ນໃຫ້ຖືເປັນອັນສະລະສິດໂດຍບໍ່ມີຂໍ້ໂຕແຍ້ງໃດໆ.

**11.** ບໍລິສັດ ມີສິດຢ່າງອິດສະຫຼະທີ່ຈະນຳໃຊ້ຮູບພາບ, ສຽງ, ພາບເຄື່ອນໄຫວ ຂອງລູກຄ້າຜູ້ໄດ້ຮັບສິດສົມບູນ ໃນສື່ໂຄສະນາ ແລະ ການປະຊາສຳພັນ ໃນທຸກຮູບແບບ ບໍ່ວ່າຈະໃນປະຈູບັນ ຫຼື ເວລາໃດໜຶ່ງໃນອະນາຄົດ ໂດຍບໍ່ຈຳເປັນຕ້ອງໄດ້ແຈ້ງ ຫຼື ໄດ້ຮັບການພິຈາລະນາເພີ່ມເຕີມຈາກລູກຄ້າ.

**12.** ບໍລິສັດ ຂໍສະຫງວນສິດໃນການຍົກເລີກ, ປ່ຽນແປງ, ຫຼື ຂະຫຍາຍເວລາກິດຈະກຳ ຫຼື ເພີກຖອນ ແຄມເປນດັ່ງກ່າວນີ້ ໂດຍອີງຕາມດຸນພິນິດ ຫຼື ການຕັດສິນຂອງຕົນແຕ່ພຽງຝ່າຍດຽວ.

**13.** ຮູບພາບຂອງລາງວັນທີ່ປະກົດຢູ່ໃນ ສື່ໂຄສະນາຕ່າງໆ ເປັນພຽງພາບເພື່ອການໂຄສະນາ ເຊິ່ງຂອງລາງວັນຕົວຈິງ ອາດຈະແຕກຕ່າງຈາກພາບດັ່ງກ່າວ.

**14.** ແຄມເປນດັ່ງກວ່ານີ້ແມ່ນຈະໄດ້ຮັບການຍົກເວັ້ນປະຕິບັດຕາມເງື່ອນໄຂເຫດສຸດວິໄສ ເຊັ່ນ: ສົງຄາມ, ການກໍ່ການຮ້າຍ, ຄຳສັ່ງຕ່າງໆຂອງລັດຖະບານ, ໄພທຳມະຊາດຕ່າງໆ, ຫຼື ເຫດການທີ່ບໍ່ຄາດຄິດອື່ນໆທີ່ເໜືອການຄວບຄຸມຂອງບໍລິສັດ

**15.** ກໍລະນີທີ່ເກີດມີຂໍ້ຂັດແຍ້ງໃນການຮັບລາງວັນ ຫຼື ບໍ່ປະຕິບັດຕາມຂໍ້ກຳນົດກົດກະຕິກາ ແລະ ເງື່ອນໄຂການເຂົ້າຮ່ວມແຄມເປນໂດຍສົມບູນ ແລະ ການຮັບລາງວັນ ໃຫ້ຖືເອົາການຕັດສິນຂອງບໍລິສັດເປັນທີ່ສິ້ນສຸດ ແລະ ມີຜົນສັກສິດ. ການໂຕ້ຕອບກັນທາງຈົດໝາຍໃດໆແມ່ນຈະບໍ່ຖືກນຳມາພິຈາລະນາໃນກໍລະນີດັ່ງກ່າວ.

| | | |
|---|---|---|
| **ລາຍເຊັນຜູ້ອະນຸມັດ** | **ລາຍເຊັນຜູ້ຮັບຟອມ** | **ລາຍເຊັນຜູ້ຂໍຮັບສິດ** |